**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 26 ມີນາ 2023 (03-26-2023)**

---

# ພຣະເຢຊູໄດ້ເປີດຕາຂ້າພະເຈົ້າໃຫ້ເຫັນຄວາມຈິງ

*ເມື່ອໃດທີ່ທ່ານດີໃຈແທ້ໆທີ່ສາມາດເຫັນໄດ້ຢ່າງຊັດເຈນ?*

**ຈຸດສໍາຄັນໃນບົດຮຽນ:** ພຣະເຢຊູໄດ້ນໍາພາຂ້າພະເຈົ້າໃຫ້ເຫັນພຣະອົງຫຼາຍຍິ່ງຂຶ້ນວ່າພຣະອົງແມ່ນໃຜ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອຂ້າພະເຈົ້າຍ້າຍໄປຢູ່ຣັດ ເທັກຊັສ ໃນປີ 2005, ຂ້າພະເຈົ້າຈໍາເປັນຕ້ອງໄປເຮັດໃບຂັບຂີ່ໃໝ່. ເມື່ອຂ້າພະເຈົ້າໄປທີ່ພະແນກຮັກສາຄວາມປອດພັຍຂອງຣັດເທັກຊັສ, ຜູ້ຍິງຄົນນຶ່ງທີ່ທໍາໜ້າທີ່ກວດວັດສາຍຕາໄດ້ຊ່ວຍຂ້າພະເຈົ້າ. ສິ່ງທີ່ຂ້າພະເຈົ້າຕ້ອງເຮັດແມ່ນອ່ານຕົວອັກສອນທີ່ປາກົດຢູ່ໃນໜ້າຈໍ. ບໍ່ມີບັນຫາ, ຂ້າພະເຈົ້າເພັ່ງເບິ່ງໜ້າຈໍທໍາອິດແລະໜ້າຈໍອັນທີ່ສອງ. ແຕ່ໜ້າຈໍທີ່ສາມນັ້ນເພ. ມັນເບິ່ງຄືວ່າເປັນການທົດສອບ. ເມື່ອຂ້າພະເຈົ້າຖາມກ່ຽວກັບເຄື່ອງທີ່ເພນັ້ນ, ນາງໄດ້ຕອບດ້ວຍຮອຍຍິ້ມແລະໃຫ້ຂ້າພະເຈົ້າອ່ານອີກ. ເຄື່ອງຈັກທໍາງານປົກກະຕິດີ, ແຕ່ວ່າຕາຂອງຂ້າພະເຈົ້າເບິ່ງບໍ່ເຫັນ. ຂ້າພະເຈົ້າຕ້ອງການແວ່ນຕາແລະຂ້າພະເຈົ້າບໍ່ເຄີຍຄິດເຣື່ອງນີ້ເລີຍ. ຂ້າພະເຈົ້າກໍບໍ່ແນ່ໃຈວ່າສາຍຕາຂອງຂ້າພະເຈົ້າເບິ່ງບໍ່ໄດ້ດີມາດົນປານໃດແລ້ວ. ເພາະຂ້າພະເຈົ້າບໍ່ເຄີຍສັງເກດເນື່ອງຈາກວ່າຂ້າພະເຈົ້າໄດ້ສົ້ນເຄີຍກັບມັນແລ້ວ.

ຕໍ່ມາເມື່ອຂ້າພະເຈົ້າໃສ່ແວ່ນຕາ, ຂ້າພະເຈົ້າໄດ້ເຂົ້າໃຈດີເຖິງສິ່ງທີ່ໄດ້ຂາດໄປນັ້ນ. ອັນນີ້ຄືວິທີສ່ວນໃຫຍ່ທີ່ພວກເຮົາດໍາເນີນການຢູ່ໃນໂລກຝ່າຍວິນຍານ. ພວກເຮົາຄິດວ່າພວກເຮົາກໍາລັງເບິ່ງຊີວິດໃນສິ່ງທີ່ມັນເປັນໄປ, ແຕ່ເວລາທີ່ພວກເຮົາໄດ້ພົບກັບພຣະເຢຊູແລະເບິ່ງໂລກຜ່ານທາງພຣະອົງ, ພວກເຮົາເຫັນຄວາມຈິງ-ແລະພວກເຮົາເຫັນຢ່າງຊັດເຈນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

## ສຶກສາພຣະຄັມພີ

## 1. ໂຢຮັນ: 9:1-7

*1. ເມື່ອພຣະເຢຊູກໍາລັງສະເດັດໄປຊົງເຫັນຊາຍຄົນນຶ່ງຕາບອດແຕ່ກໍາເນີດ. 2. ພວກສາວົກຂອງພຣະອົງທູນຖາມພຣະອົງວ່າ," ພຣະອາຈານເອີຍ, ຜູ້ໃດໄດ້ເຮັດຜິດບາບ ຄົນນີ້ຫລືພໍ່ແມ່ຂອງຕົນ ລາວຈຶ່ງເກີດມາຕາບອດ." 3. ພຣະເຢຊູຊົງຕອບວ່າ, "ບໍ່ແມ່ນຄົນນີ້ຫລືພໍ່ແມ່ຂອງຕົນໄດ້ເຮັດບາບ ແຕ່ເກີດມາເພື່ອໃຫ້ພຣະຣາຊະກິດຂອງພຣະເຈົ້າປາກົດໃນຕົວຄົນນີ້. 4. ເມື່ອຍັງເວັນຢູ່ເຮົາທັງຫລາຍຕ້ອງເຮັດພຣະຣາຊະກິດຂອງພຣະອົງຜູ້ຊົງໃຊ້ເຮົາມາ ເວລາກາງຄືນກໍຈະໄດ້ມາເຖິງ ຄືເວລາທີ່ບໍ່ມີຜູ້ໃດອາດເຮັດການໄດ້. 5. ຕາບໃດເຮົາຍັງຢູ່ໃນໂລກເຮົາກໍເປັນຄວາມສວ່າງຂອງໂລກ." 6. ເມື່ອຊົງກ່າວດັ່ງນັ້ນແລ້ວພຣະອົງຊົງຖົ່ມນໍ້າລາຍລົງດິນ ແລະຊົງເຮັດໃຫ້ດິນເປັນຕົມດ້ວຍນໍ້າລາຍນັ້ນ ແລ້ວຊົງເອົາຕົມນັ້ນທາຕາຂອງຄົນຕາບອດ, 7. ກັບທັງຊົງກ່າວຕໍ່ຄົນນັ້ນວ່າ, "ຈົ່ງໄປລ້າງເສັຽທີ່ສະຊີໂລອາມ" (ຊຶ່ງແປວ່າໃຊ້ໄປ) ລາວຈຶ່ງໄປລ້າງ ແລ້ວກັບມາກໍເຫັນຮຸ່ງໄດ້.*

ພັນລະຍາຂ້າພະເຈົ້າມັກຈະຕໍ່ວ່າຢູ່ເລື້ອຍໆວ່າພາດການເບິ່ງຂ້າມສິ່ງທີ່ດີໆທີ່ຢູ່ອ້ອມໆຕົວ. ບາງຄັ້ງມັນງ່າຍກວ່າໃນການທີ່ຈະວາງແຜນແລະຈັດຕາຕະລາງຈະເຮັດບາງສິ່ງເປັນອາທິດຫຼືເປັນຫຼາຍເດືອນກ່ວາຈະຊອກຫາເວລາສອງສາມນາທີເພື່ອຈະເຮັດບາງສິ່ງບາງຢ່າງໃນດຽວນີ້. ນີ້ບໍ່ໄດ້ແມ່ນກໍລະນີສໍາລັບພຣະເຢຊູ. ພຣະອົງຮູ້ວ່າພຣະອົງຈະໄປບ່ອນໃດ (ໃນທີ່ສຸດຈົນເຖິງໄມ້ກາງແຂນ) ແລະພຣະອົງໄດ້ສວຍເອົາທຸກໆໂອກາດເຫຼົ່ານັ້ນທີ່ຈະຮັກ, ຈະສອນ, ແລະຮັບໃຊ້ຄົນອື່ນໆ.

ນີ້ແມ່ນກໍລະນີທີ່ພຣະເຢຊູກັບພວກສາວົກກໍາລັງອອກຈາກພຣະວິຫານ (ໂຢຮັນ 8:59) ແລະໄດ້ເດີນຜ່ານຄົນຕາບອດຄົນນຶ່ງ. ບໍລິເວນພຣະວິຫານເຕັມດ້ວຍຝຸງຊົນແລະບຽດສຽດຢ່າງໜາແໜ້ນ. ດ້ວຍຄວາມວຸ້ນວາຍທັງໝົດຢູ່ໃນບໍລິເວນນັ້ນ, ມັນຈະເປັນການງ່າຍສໍາລັບພຣະເຢຊູແລະສາວົກຂອງພຣະອົງທີ່ຈະຍ່າງກາຍໄປ. ຍິ່ງໄປກ່ວານັ້ນຍ້ອນພຣະເຢຊູໄດ້ "ຊົງບັງໄວ້" ເພື່ອໃຫ້ພົ້ນຈາກການຖືກພວກຟາຣີຊາຍຄ່ວາງກ້ອນຫີນໃສ່. ການຂົ່ມຂູ່ນີ້ບໍ່ໄດ້ຢຸດຢັ້ງພຣະເຢຊູໃນການເຫັນຊາຍຄົນນີ້. ພຣະເຢຊູເຫັນທຸກຄົນແລະເຫັນທຸກສິ່ງ. ບໍ່ມີສິ່ງໃດລຸດພົ້ນຈາກສາຍຕາຂອງພຣະອົງໄປໄດ້. ແລະແມ່ນຫຍັງອີກແດ່ທີ່ພຣະເຢຊູໄດ້ເຫັນ? ຜູ້ຊາຍທີ່ບໍ່ເຄີຍເຫັນສິ່ງໃດເລີຍ. ມັນເປັນເຫດການອັນໜ້າຕື່ນເຕັ້ນທີ່ໄດ້ພົບແທ້ໆ!

*ເມື່ອໃດທີ່ທ່ານໄດ້ເຫັນຣາຊກິດຂອງພຣະເຈົ້າປາກົດໃນຊີວິດຂອງຜູ້ໃດຜູ້ນຶ່ງ?*

ໃນສະຕະວັດແລກການເກີດພະຍາດຕ່າງໆຫຼືເກີດເປັນເປັ້ຽເປັນລ່ອຍແມ່ນຄິດວ່າເປັນຜົນເກີດມາຈາກການບາບ. ພວກຜູ້ນໍາສາສນາເບິ່ງພວກຄົນພິການຕ່ໍາກໍເພາະວ່າພວກເຂົາໄດ້ເຫັນວ່າພວກຄົນພິການເປັນຄົນບໍ່ສະອາດແລະເປັນບາບ. ນີ້ແມ່ນເຫດຜົນຕົ້ນຕໍທີ່ພຣະເຢຊູແຍກຕົວພຣະອົງເອງອອກຈາກພວກນັກທັມ. ໃນຂນະທີ່ພວກຜູ້ນໍາສາສນາບໍ່ສົນໃຈຫັ້ງແລະຍັງຫຼີກລ້ຽງຄົນເຫຼົ່ານີ້, ແຕ່ພຣະເຢຊູຍັງໄດ້ຮັກພວກເຂົາ. ພຣະອົງໄດ້ເຫັນພວກເຂົາແລະຄວາມຕ້ອງການຂອງພວກເຂົາ.

ແມ່ນແຕ່ພວກສາວົກຂອງພຣະເຢຊູຍັງເຂົ້າໃຈຢ່າງນັ້ນວ່າບາບເປັນສາເຫດທີ່ເຮັດໃຫ້ຊາຍຄົນນີ້ຕາບອດ. ພວກເຂົາເຈົ້າກໍບໍ່ແນ່ໃຈ, ຄິດວ່າ, ແມ່ນໃຜໄດ້ເຮັດບາບຈຶ່ງເກີດພະຍາດນີ້. ແມ່ນຕົວລາວເອງຫຼືພໍ່ແມ່ຂອງລາວ? ຄໍາຕອບຂອງພຣະເຢຊູໄດ້ຊ່ວຍໃຫ້ພວກເຂົາເຈົ້າແຍກແຍະຫຼັກສາສນາສາດບໍ່ດີອັນມີມາຕັ້ງນານຫຼາຍປີ. ສິ່ງທີ່ພຣະເຢຊູກໍາລັງຈະເຮັດແມ່ນເປີດຕາທາງຝ່າຍຈິດວິນຍານຂອງພວກເຂົາເໝືອນດັ່ງທີ່ພຣະອົງໄດ້ເປີດຕາທາງຝ່າຍເນື້ອໜັງຂອງຊາຍຕາບອດ. "ບໍ່ແມ່ນຜູ້ຊາຍຄົນນີ້ຫຼືພໍ່ແມ່ຂອງລາວໄດ້ເຮັດບາບ." ບູມ! ຄວາມຈິງອັນໃໝ່ໄດ້ເລີ້ມຂຶ້ນ. ຜູ້ຊາຍຄົນນີ້ທີ່ໄດ້ຢູ່ໃນຄວາມມືດກໍໃກ້ຈະເຫັນຮຸ່ງເປັນຄັ້ງທໍາອິດ. ແສງສວ່າງຂອງໂລກຈະເຂົ້າມາກໍາຈັດຄວາມມືດອອກໄປຈາກຊີວິດຂອງຊາຍຄົນນີ້.

ພວກເຮົາບໍ່ໄດ້ຖືກບອກວ່າເປັນຫຍັງພຣະເຢຊູຈຶ່ງຖົ່ມນໍ້າລາຍລົງດິນແລະເຮັດເປັນຕົມ, ແຕ່ຫຼັງຈາກທີ່ພຣະເຢຊູໄດ້ເອົາມັນປົກຕາຂອງລາວ, ພຣະອົງໄດ້ສັ່ງລາວໄປລ້າງທີ່ສະນໍ້າຊີໂລອາມ. ຊີໂລອາມ ມີຄວາມໝາຍວ່າ ຖືກສົ່ງ, "ຜູ້ທີ່ຖືກສົ່ງມາ" ຂອງພຣະເຈົ້າ, ຜູ້ເປັນແສງສວ່າງຂອງໂລກ, ໄດ້ສົ່ງຊາຍຄົນນີ້ໄປທີ່ສະນໍ້າ. ມັນສໍາຄັນທີ່ໃຫ້ສັງເກດເຫັນການເນັ້ນໃສ່ຄວນຈະເປັນຜູ້ທີ່ໄດ້ສົ່ງລາວໄປ, ບໍ່ແມ່ນສະຖານທີ່ໆລາວຖືກສົ່ງໄປ. ການປິ່ນປົວບໍ່ໄດ້ມາຈາກສະນໍ້າຊີໂລອາມ, ແຕ່ມາຈາກ "ຜູ້ທີ່ຖືກສົ່ງມາ" ຜູ້ນໍາຄວາມສວ່າງມາສູ່ຄວາມມືດ.

## 2. ໂຢຮັນ: 9:32-33

*32. ຕັ້ງແຕ່ເດີມມີໂລກມາ ບໍ່ທ່ອນໄດ້ຍິນວ່າມີຜູ້ໃດໄດ້ປົດຕາຂອງຄົນທີ່ເປັນຕາບອດແຕ່ກໍາເນີດ. 33. ຖ້າທ່ານຜູ້ນັ້ນບໍ່ໄດ້ມາຈາກພຣະເຈົ້າແລ້ວ ກໍບໍ່ສາມາດຈະເຮັດສິ່ງໃດໄດ້."*

ພວກຟາຣີຊາຍໃນໂຢຮັນບົດ 9 ໄດ້ພາດໃນຈຸດນີ້. ຜູ້ຊາຍຄົນນີ້, ຕາບອດຕັ້ງແຕ່ເກີດມາ, ດຽວນີ້ສາມາດເຫັນໄດ້, ແຕ່ພວກເຂົາມີແຕ່ກັງວົນນໍາແຕ່ໃນວັນໃດຂອງອາທິດທີ່ໄດ້ມີການອັສຈັນເກີດຂຶ້ນແລະຜູ້ປິ່ນປົວຄົນນີ້ໄດ້ຄິດວ່າລາວເອງເປັນໃຜ. "ພວກຊ່ຽວຊານສາສນາ" ຜູ້ທີ່ຄວນຈະສາມາດເຫັນດ້ວຍຕາທາງຝ່າຍຈິດວິນຍານແຕ່ກັບກາຍເປັນຄົນທີ່ຕາບອດທີ່ສຸດ. ແຕ່ຜູ້ຊາຍທີ່ຕາບອດມາແຕ່ກໍາເນີດທີ່ບໍ່ໄດ້ແມ່ນ "ຜູ້ຊ່ຽວຊານ" ເຣື່ອງທາງຝ່າຍຈິດວິນຍານກໍໄດ້ເຫັນການອັສຈັນແລະເຊື່ອຜູ້ທີ່ເຮັດການອັສຈັນນັ້ນ. ລາວສາມາດເຫັນໄດ້ພໍທີ່ຈະຮູ້ວ່າພຣະເຢຊູຕ້ອງມາຈາກພຣະເຈົ້າ. ພຣະອົງຈະບໍ່ເປັນໄດ້ຢ່າງໃດ? ພຣະອົງໄດ້ເຮັດສິ່ງທີ່ບໍ່ມີໃຜຄິດວ່າຈະເປັນໄປໄດ້: ປິ່ນປົວຜູ້ຊາຍຕາບອດມາຕັ້ງແຕ່ເກີດ.

*ແມ່ນຫຍັງຄືສິ່ງກີດຂວາງບາງຢ່າງທີ່ປົກປິດຄົນຈາກການສັງເກດເຫັນຣາຊກິດຂອງພຣະເຈົ້າໃນທຸກວັນນີ້?*

ສິ່ງນຶ່ງທີ່ຍິ່ງໃຫຍ່ກ່ຽວກັບພຣະເຢຊູແມ່ນພຣະອົງຍັງກະທຳຣາຊກິດຂອງພຣະອົງຢູ່. ຄຳຖາມຄື: ພວກເຮົາຍັງຈະເຫັນພຣະອົງທຳງານບໍ່? ນຶ່ງໃນຫຼັກການທີ່ສຳຄັນທາງຝ່າຍຈິດວິນຍານທີ່ມີຜົນກະທົບທີ່ສຸດທີ່ຂ້າພະເຈົ້າເຄີຍມີປະສົບການແມ່ນໄດ້ມາຈາກການປະສົບການກັບພຣະເຈົ້າຂອງ ເຫັນຣີ ບແລັກກາບີ. ບແລັກກາບີ ໄດ້ຂຽນວ່າຊາວຄຣິສະຕຽນຄວນຊອກຫາບ່ອນທີ່ພຣະເຈົ້າທຳງານຂອງພຣະອົງຊຶ່ງຢູ່ອ້ອມຮອບພວກເຮົາແລະເຂົ້າປະກອບສ່ວນກັບພຣະອົງໃນວຽກງານນັ້ນ. ຂ້າພະເຈົ້າຍັງເປັນຄົນໜຸ່ມໃນເວລາທີ່ໄດ້ຍິນຄັ້ງທຳອິດ, ແລະນັບຕັ້ງແຕ່ນັ້ນ, ຂ້າພະເຈົ້າໄດ້ພະຍາຍາມຢູ່ສເມີວ່າເຮັດແນວໃດ, ມັນຈຶ່ງຈະກາຍເປັນນິສັຍສຳລັບຂ້າພະເຈົ້າທີ່ຈະຂໍໃຫ້ພຣະເຈົ້າສຳແດງໃຫ້ຮູ້ວ່າ ພຣະອົງກຳລັງທຳກິຈກັມອັນໃດທີ່ຢູ່ອ້ອມຮອບຕົວໃນແຕ່ລະວັນ. ຕລອດເວລາຂໍໃຫ້ພຣະເຈົ້າເປີດຕາຂອງຂ້າພະເຈົ້າໃຫ້ເຫັນບາງສິ່ງບາງຢ່າງທີ່ພຣະອົງກຳລັງເຮັດຢູ່ເພື່ອວ່າຕາຂອງຂ້າພະເຈົ້າຈະໄດ້ເປີດອອກ.

ເມື່ອພວກເຮົາໄດ້ຮັບພອນທີ່ສັງເກດເຫັນການເຄື່ອນໄຫວຂອງພຣະອົງ, ພວກເຮົາຈະບໍ່ໄດ້ຢືນຢູ່ອ້ອມຮອບແລະໂຕ້ຖຽງກັນກ່ຽວກັບເຣື່ອງນີ້ດັ່ງທີ່ພວກຟາຣີຊາຍໄດ້ເຮັດ; ພວກເຮົາແມ່ນຕ້ອງການເດີນເຂົ້າໄປຫາແລະເຂົ້າປະກອບສ່ວນ. ໃນເວລານີ້ພວກເຮົາເຊື່ອຟັງພຣະອົງ, ພວກເຮົາບໍ່ພຽງແຕ່ເດີນເຂົ້າໄປໃນວຽກງານຂອງພຣະອົງ, ແຕ່ພວກເຮົາກ້າວເຂົ້າໄປດ້ວຍພະລັງທີ່ມາຈາກພຣະອົງ.

ຜູ້ຊາຍອາດີດຄົນຕາບອດນີ້ໄດ້ເວົ້າບາງສິ່ງບາງຢ່າງທີ່ເລິກເຊິ່ງກັບພວກຜູ້ນຳສາສນາເຫຼົ່ານີ້, ໂດຍສະເພາແມ່ນການພິຈາລະນາວ່າລາວບໍ່ໄດ້ຢູ່ອ້ອມຂ້າງພຣະເຢຊູແຕ່ໃດມາ: “ຖ້າຄົນນີ້ບໍ່ໄດ້ມາຈາກພຣະເຈົ້າ, ເພິ່ນຈະບໍ່ສາມາດເຮັດຫັຍງໄດ້” (ຂໍ້ 33). ແທ້ຈິງແລ້ວ, ລາວເວົ້າວ່າບໍ່ພຽງແຕ່ພຣະເຢຊູບໍ່ໄດ້ເຮັດການອັສຈັນນີ້, ແຕ່ພຣະອົງບໍ່ສາມາດເຮັດຫັຍງໄດ້. “ຜູ້ທີ່ເຂົ້າສນິດຢູ່ໃນເຮົາແລະເຮົາເຂົ້າສນິດຢູ່ໃນຜູ້ນັ້ນແມ່ນຜູ້ນັ້ນແຫລະ, ຈະເກີດຜົນຫລາຍເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້” (ໂຢຮັນ 15:5ຂ). ພວກເຮົາບໍ່ມີກຳລັງພໍທີ່ຈະເຮັດສິ່ງໃດໄດ້. ບໍ່ມີສິ່ງໃດທີ່ຄົງຢູ່ຊົ່ວນິຣັນດອນໄດ້ດ້ວຍມືຂອງພວກເຮົາຫຼືໂດຍຄຳເວົ້າຂອງພວກເຮົາເວັ້ນເສັຽແຕ່ວ່າພວກເຮົາຈະຕິດສນິດຢູ່ໃນພຣະເຢຊູ. ພຣະອົງເປັນແຫຼ່ງຂອງສະຕິປັນຍາ, ຣິດອຳນາດ, ແລະພະລັງຄວາມເຂັ້ມແຂງທັງໝົດ.

## 3. ໂຢຮັນ 9:35-38.

*35. ພຣະເຢຊູຊົງໄດ້ຍິນວ່າເຂົາໄດ້ໄລ່ຄົນນັ້ນອອກແລ້ວ ແລະເມື່ອພຣະອົງຊົງພົບລາວ ຈຶ່ງຊົງຖາມລາວວ່າ, “ເຈົ້າໄວ້ວາງໃຈໃນບຸດມະນຸດຫລື.” 36. ຊາຍຄົນນັ້ນທູນຕອບພຣະອົງວ່າ, “ນາຍເອີຍ, ບຸດມະນຸດນັ້ນຄືຜູ້ໃດ ເພື່ອຂ້ານ້ອຍຈະວາງໃຈໃນເພິ່ນ.” 37. ພຣະເຢຊູຊົງກ່າວກັບລາວວ່າ, “ເຈົ້າໄດ້ເຫັນເພິ່ນແລ້ວຄືຜູ້ນັ້ນແຫລະ, ທີ່ກຳລັງເວົ້າຢູ່ກັບເຈົ້າ.” 38. ລາວຈຶ່ງທູນວ່າ, “ນາຍເຈົ້າເອີຍ, ຂ້ານ້ອຍວາງໃຈເຊື່ອແລ້ວ” ລາວຈຶ່ງຂາບລົງໄຫວ້ພຣະອົງ.*

ຫຼັງຈາກການປະເຊີນໜ້າກັບພວກຟາຣີຊາຍໃນຂໍ້ 30-33, ອາດີດຄົນຕາບອດໃນເມື່ອກ່ອນໄດ້ຖືກດູໝິ່ນໂດຍ “ຜູ້ລ້ຽງຝ່າຍວິນຍານ” ຂອງອິສຣາເອັນແລະ “ພວກເຂົາໄດ້ໄລ່ລາວອອກ” (ຂໍ້ 34). ໃນເວລານັ້ນ, ຊາຍຄົນນັ້ນໄດ້ສະແດງຄວາມເຂົ້າໃຈທາງຝ່າຍຈິດວິນຍານຍິ່ງໃຫຍ່ກວ່າພວກຫົວໜ້າສາສນາ, ແລະພວກເຂົາໄດ້ຕອບໂຕ້ໂດຍການຕັດຂາດລາວອອກໄປ! ໂດຍການຂັບໄລ່ອອກຈາກຊຸມຊົນຊາວຢິວ, ພວກເຂົາບໍ່ຕ້ອງການທີ່ຈະໄດ້ຍິນຈາກລາວອີກຕໍ່ໄປ.

ເມື່ອໄດ້ຍິນວ່າຊາຍຄົນນີ້ຖືກຂັບໄລ່ອອກໄປ, ພຣະເຢຊູກໍເຮັດຕາມໜ້າທີ່ຂອງຜູ້ລ້ຽງແກະທີ່ແທ້ຈິງຂອງຊາດອິສຣາເອັນທີ່ຈະເຮັດ: ພຣະອົງໄດ້ໄປຊອກຫາລາວ. ນີ້ແມ່ນການເອົາໃຈໃສ່ທີ່ສຸດ. ການຊອກແລະຊອກຫາຜູ້ໃດຜູ້ນຶ່ງບໍ່ໄດ້ເກີດຂຶ້ນໂດຍບັງເອີນ. ດັ່ງນັ້ນເມື່ອພວກເຮົາເວົ້າກ່ຽວກັບສະຖານະການເຣື່ອງນີ້ຢູ່ເລື້ອຍ. ພວກເຮົາໄດ້ສົນທະນາໃນແງ່ມຸມຂອງການ “ຊອກຫາພຣະເຈົ້າ,” ແຕ່ພຣະເຈົ້າບໍ່ໄດ້ສູນເສັຽໄປໃສ; ແຕ່ແມ່ນພວກເຮົາທີ່ຫຼົງເສັຽໄປ. ດ້ວຍເຫດນີ້ພຣະອົງຈຶ່ງສົ່ງພຣະບຸດຂອງພຣະອົງເຂົ້າມາໃນໂລກເພື່ອຊອກຫາພວກເຮົາແລະຊ່ວຍພວກເຮົາໃຫ້ພົ້ນ. ດັ່ງນັ້ນ, ມັນຈຶ່ງບໍ່ເປັນເຣື່ອງແປກໃຈເມື່ອພວກເຮົາໄດ້ເຫັນພຣະຜູ້ຊ່ວຍໄດ້ພົບກັບຊາຍຄົນນັ້ນ.

*ຄວາມເຂົ້າໃຈຂອງທ່ານເຣື່ອງພຣະເຢຊູໄດ້ເຕີບໃຫຍ່ຂຶ້ນແນວໃດ?*

ເມື່ອພົບຊາຍຄົນນັ້ນ, ພຣະເຢຊູໄດ້ຖາມລາວດ້ວຍຄຳຖາມນຶ່ງທີ່ສຳຄັນທີ່ສຸດທີ່ສົມຄວນຖາມ: “ເຈົ້າເຊື່ອໃນບຸດມະນຸດບໍ່?” ນີ້ແມ່ນຄຳ

ຖາມນີ້ງທີ່ພວກເຮົາທຸກຄົນໄດ້ຕໍ່ສູ້ກັບມັນ. ພວກເຮົາມີຄວາມເຊື່ອໃນອົງພຣະເຢຊູບໍ່? ປລາດແລະແປກ, ຜູ້ຊາຍຄົນນີ້ພ້ອມທີ່ຈະເຊື່ອເຖິງແມ່ນວ່າກ່ອນທີ່ລາວຈະຮູ້ວ່າບຸດມະນຸດແມ່ນໃຜ. ຄວາມເຊື່ອຂອງລາວມີລັກສະນະທີ່ຄາດຫັວງໄວ້ລ່ວງໜ້າ. ລາວບໍ່ຄືກັບພວກຟາຣີຊາຍຜູ້ທີ່ປະຕິເສດບໍ່ເຊື່ອໃນຄວາມຈິງ. ພວກເຂົາປະຕິເສດຄວາມຈິງທີ່ເຫັນດ້ວຍຕາແຫ່ງຄວາມເຊື່ອ. ຄົນຕາບອດໃນເຣື່ອງນີ້ບໍ່ແມ່ນຜູ້ທີ່ທົນທຸກທໍລະມານຈາກການຕາບອດມາຕັ້ງແຕ່ເກີດ. ແຕ່ແມ່ນພວກຟາຣີຊາຍ. ພວກເຂົາໄດ້ເຫັນພຣະເຢຊູທາງກາຍຍະພາບ, ແຕ່ບໍ່ເຊື່ອ, ແຕ່ສ່ວນຄົນຕາບອດເຫັນພຣະເຢຊູດ້ວຍຕາຝ່າຍວິນຍານແລະໄດ້ເຊື່ອ.

ຄວາມເຊື່ອຂອງຊາຍຄົນນີ້ຈົບລົງໃນທາງການປະກາດແລະການນະມັສການ. ການປະກາດເປັນສິ່ງສຳຄັນ, ເພາະມັນໄດ້ເວົ້າເຖິງຄວາມເຊື່ອຂອງພວກເຮົາ. ມັນເປັນສັນຍານທາງພາຍນອກທີ່ບອກເຖິງບາງສິ່ງບາງຢ່າງທີ່ພວກເຮົາໄດ້ສະແດງອອກທາງຄວາມເຊື່ອ. ອີກວິທີນຶ່ງຜູ້ຊາຍຄົນນີ້ໄດ້ສະແດງຄວາມເຊື່ອຂອງລາວແມ່ນການນະມັສການ. ເມື່ອພວກເຮົາເຫັນວ່າພຣະເຢຊູເປັນໃຜຫຼາຍຂຶ້ນແລະຊັດເຈນຂຶ້ນພວກເຮົາກໍຢາກໃຫ້ການຖວາຍນະມັສການພຣະອົງຫຼາຍຂຶ້ນ.

*ແມ່ນຫຍັງທີ່ເຮັດໃຫ້ຄຳພະຍານສ່ວນບຸກຄົນມີພະລັງຫຼາຍຂຶ້ນ?*

## ນຳໃຊ້ໃນຊີວິດ

ພຣະເຢຊູໄດ້ນຳພາຂ້າພະເຈົ້າໃຫ້ເຫັນພຣະອົງຫຼາຍຍິ່ງຂຶ້ນວ່າພຣະອົງແມ່ນໃຜ. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ເບິ່ງ.** ກຳນົດທີ່ຈະອ່ານພຣະກິດຕິຄຸນທັງສີ່ເລັ້ມ: ມັດທາຍ; ມາຣະໂກ; ລູກາ, ແລະໂຢຮັນ. ໃນຂນະທີ່ອ່ານ, ໃຫ້ສັງເກດຫາຄວາມເຂົ້າໃຈທີ່ທ່ານຄົ້ນພົບວ່າພຣະເຢຊູແມ່ນໃຜ ແລະພຣະອົງມີຈຸດປະສົງອັນໃດໃນຊີວິດຂອງທ່ານ.

- **ຈົ່ງອະທິຖານ.** ຈົ່ງອະທິຖານໃຫ້ພຣະເຈົ້າເປີດຕາແລະຈິດໃຈຂອງທ່ານ. ການປ່ຽນແປງຊີວິດເກີດຂຶ້ນເມື່ອພຣະເຢຊູຊົງສະຖິດຢູ່ໃນຕົວເຮົາ. ຂໍໃຫ້ພຣະຜູ້ເປັນເຈົ້າໃຫ້ຕາຂອງທ່ານເພື່ອເບິ່ງຄົນທີ່ຢູ່ອ້ອມຂ້າງທ່ານທີ່ມີຄວາມຂັດສົນ. ພຣະເຢຊູເຫັນຄົນຕາບອດວ່າລາວແມ່ນໃຜ. ຂໍໃຫ້ພຣະເຈົ້າຊ່ວຍເຮົາໃຫ້ເຫັນຜູ້ຄົນໃນແບບທີ່ພຣະອົງເຫັນເຂົາ.

- **ຊ່ວຍ.** ພຣະເຢຊູໄດ້ພົບກັບຄວາມຕ້ອງການທາງດ້ານຮ່າງກາຍ ແລະຈາກນັ້ນກໍໃຊ້ເປັນຈຸດເລີ້ມຕົ້ນທາງຄວາມຈຳເປັນທາງຝ່າຍວິນຍານ. ຊອກຫາຄົນໃນອາທິດນີ້ຜູ້ທີ່ມີຄວາມຕ້ອງການທີ່ທ່ານສາມາດຊ່ວຍໄດ້. ຫຼັງຈາກຮັບໃຊ້ຄົນນັ້ນແລ້ວຈົ່ງໃຊ້ໂອກາດທີ່ທ່ານມີເພື່ອເວົ້າເຖິງເຣື່ອງພຣະເຢຊູ.

ພວກເຮົາທຸກຄົນບັນລຸເຖິງຈຸດທີ່ພວກເຮົາຮັບຮູ້ຂໍ້ຈຳກັດທາງດ້ານຮ່າງກາຍຂອງພວກເຮົາ. ບໍ່ວ່າຈະເປັນການເບິ່ງເຫັນຂອງພວກເຮົາຫຼືສິ່ງອື່ນອີກ. ແຕ່ສິ່ງທີ່ສຳຄັນກ່ວານັ້ນແມ່ນເຮົາມາເບິ່ງຂໍ້ຈຳກັດທາງຝ່າຍຈິດວິນຍານຂອງພວກເຮົາ ແລະຫັນມາຫາພຣະເຢຊູເພື່ອຄວາມລອດ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ VR**